ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 332/ລບ
ນະຄອນຫຼວງວຽງຈັນ, ວັນທີ 19.07.2024

# ດຳລັດ
# ວ່າດ້ວຍ ການສຶກສາພາກເອກະຊົນ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍການສຶກສາ ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມ ໜັງສືສະເໜີ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 817/ສສກ, ລົງວັນທີ 25 ມິຖຸນາ 2024.

## ລັດຖະບານ ອອກດຳລັດ:
## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ການຕິດຕາມ ກວດກາ ວຽກງານການສຶກສາພາກເອກະຊົນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໄດ້ມາດຕະຖານ, ມີຄຸນນະພາບ, ມີຄວາມຍືນຍົງ ແນໃສ່ ຊຸກຍູ້, ສົ່ງເສີມ ໃຫ້ເອກະຊົນ ລົງທຶນເຂົ້າໃນການພັດທະນາຊັບພະຍາກອນມະນຸດ ໃຫ້ເປັນພົນລະເມືອງດີ, ມີຄຸນສົມບັດ, ມີສິນທຳ, ມີຄວາມຮູ້, ຄວາມສາມາດ, ມີວິຊາຊີບ, ວິຊາສະເພາະ, ສຸຂະພາບພະລານາໄມ, ຮູ້ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ, ຮູ້ຮັກສາ ແລະ ສົ່ງເສີມ ສິລະປະ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ຂອງຊາດ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ການສຶກສາພາກເອກະຊົນ

ການສຶກສາພາກເອກະຊົນ ແມ່ນ ການສຶກສາໃນລະບົບການສຶກສາແຫ່ງຊາດ ທີ່ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ເປັນຜູ້ລົງທຶນ ຕາມການອະນຸຍາດຈາກຂະແໜງການສຶກສາທິການ ແລະ ກິລາ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຫຼັກສູດນານາຊາດ ໝາຍເຖິງ ຫຼັກສູດການຮຽນ-ການສອນ ຂອງປະເທດໃດໜຶ່ງ ຊຶ່ງເປັນທີ່ຍອມຮັບຈາກສາກົນ;

2. **ຫຼັກສູດສອງພາສາ** ໝາຍເຖິງ ຫຼັກສູດທີ່ນຳໃຊ້ພາສາລາວ ສິດສອນຄວບຄູ່ກັບພາສາຕ່າງປະເທດເຂົ້າໃນລະບົບການຈັດຕັ້ງການຮຽນ-ການສອນ ຕາມການອະນຸມັດ ຂອງກະຊວງສຶກສາທິການ ແລະ ກິລາ;

3. **ຫຼັກສູດການສຶກສາແຫ່ງຊາດ** ໝາຍເຖິງ ຫຼັກສູດ ທີ່ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ສ້າງ ແລະ ປັບປຸງ ເນື້ອໃນ ແລະ ກຳນົດຮູບແບບການຈັດຕັ້ງການຮຽນ-ການສອນ ແລະ ໄດ້ຮັບການອະນຸມັດນຳໃຊ້ໃນຂອບເຂດທົ່ວປະເທດ.

### ມາດຕາ 4 ຫຼັກການກ່ຽວກັບວຽກງານການສຶກສາພາກເອກະຊົນ

ການເຄື່ອນໄຫວວຽກງານການສຶກສາພາກເອກະຊົນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ຍຸດທະສາດພັດທະນາຊັບພະຍາກອນມະນຸດ ແຫ່ງຊາດ ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໃນແຕ່ລະໄລຍະ;

2. ຮັບປະກັນການຈັດຕັ້ງການຮຽນ-ການສອນ ຕາມ ສາມ ລັກສະນະ ແລະ ຫ້າ ຫຼັກມູນການສຶກສາ ທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ;

3. ຮັບປະກັນ ການຮຽນ-ການສອນ ທິດສະດີ ຄຽງຄູ່ກັບພາກປະຕິບັດຕົວຈິງ ໃຫ້ໄດ້ຮັບຜົນດີ;

4. ຮັບປະກັນຄວາມຖືກຕ້ອງ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;

5. ຮັບປະກັນການພັດທະນາຊັບພະຍາກອນມະນຸດ ທີ່ສາມາດຕອບສະໜອງກັບຄວາມຕ້ອງການ ຂອງຕະຫຼາດແຮງງານ ແລະ ດຶງດູດການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ.

### ມາດຕາ 5 ຂອບເຂດການນຳໃຊ້ດຳລັດ

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນ ກັບວຽກງານການສຶກສາພາກເອກະຊົນ ຢູ່ ສປປ ລາວ.

## ໝວດທີ 2
## ສະຖານການສຶກສາພາກເອກະຊົນ

### ມາດຕາ 6 ສະຖານການສຶກສາພາກເອກະຊົນ

ສະຖານການສຶກສາພາກເອກະຊົນ ແມ່ນບ່ອນຈັດຕັ້ງການຮຽນ-ການສອນ, ການຄົ້ນຄວ້າວິໄຈ, ການຝຶກອົບຮົມ, ການປະຕິບັດຕົວຈິງ ທັງໃນ ແລະ ນອກສະຖານການສຶກສາ ຊຶ່ງປະກອບດ້ວຍ ໂຮງຮຽນ, ວິທະຍາໄລ, ສະຖາບັນ, ມະຫາວິທະຍາໄລ ແລະ ສະຖານບໍລິການທີ່ເປັນການສົ່ງເສີມດ້ານການສຶກສາ.

### ມາດຕາ 7 ປະເພດສະຖານການສຶກສາພາກເອກະຊົນ

ສະຖານການສຶກສາພາກເອກະຊົນ ແບ່ງອອກເປັນປະເພດ ດັ່ງນີ້:

1. ສະຖານລ້ຽງເດັກ ແລະ ພັດທະນາເດັກ ເອີ້ນວ່າ ໂຮງລ້ຽງເດັກ ຫຼື ສູນພັດທະນາເດັກ;

2. ສະຖານການຮຽນ-ການສອນ ເດັກອະນຸບານ ເອີ້ນວ່າ ໂຮງຮຽນອະນຸບານ;

3. ສະຖານການຮຽນ-ການສອນ ຊັ້ນປະຖົມສຶກສາ ເອີ້ນວ່າ ໂຮງຮຽນປະຖົມສົມບູນ;

4. ສະຖານການຮຽນ-ການສອນ ຊັ້ນມັດທະຍົມສຶກສາ ເອີ້ນວ່າ ໂຮງຮຽນມັດທະຍົມຕອນຕົ້ນ, ໂຮງຮຽນມັດທະຍົມຕອນປາຍ ແລະ ໂຮງຮຽນມັດທະຍົມສົມບູນ;

5. ສະຖານການຮຽນ-ການສອນ ຂອງອາຊີວະສຶກສາ ເອີ້ນວ່າ ສູນຝຶກອົບຮົມ, ໂຮງຮຽນ, ວິທະຍາໄລ ແລະ ສະຖາບັນ;

6. ສະຖານການຮຽນ-ການສອນ ຂອງການສຶກສາຊັ້ນສູງ ເອີ້ນວ່າ ວິທະຍາໄລ, ສະຖາບັນ ແລະ ມະຫາວິທະຍາໄລ;

7. ສະຖານການຮຽນ-ການສອນ ການສຶກສານອກໂຮງຮຽນ.

ນອກຈາກປະເພດສະຖານການສຶກສາພາກເອກະຊົນ ທີ່ກຳນົດໄວ້ຂ້າງເທິງນີ້ ຍັງມີສະຖານບໍລິການທີ່ເປັນການສົ່ງເສີມດ້ານການສຶກສາ ຕາມການອະນຸຍາດ ຂອງຂະແໜງການສຶກສາທິການ ແລະ ກິລາ.

## ໝວດທີ 3
## ການລົງທຶນການສຶກສາພາກເອກະຊົນ

### ມາດຕາ 8 ການລົງທຶນການສຶກສາພາກເອກະຊົນ

ການລົງທຶນການສຶກສາພາກເອກະຊົນ ແມ່ນ ການລົງທຶນໃສ່ການສ້າງຕັ້ງສະຖານການສຶກສາປະເພດຕ່າງໆ, ການຈັດຕັ້ງການຮຽນ-ການສອນ ແລະ ການບໍລິການດ້ານການສຶກສາ ຕາມຫຼັກສູດ ທີ່ກະຊວງສຶກສາທິການ ແລະ ກິລາ ອະນຸມັດ ເພື່ອສະໜອງການສຶກສາ ໃຫ້ແກ່ສັງຄົມ.

### ມາດຕາ 9 ຮູບການລົງທຶນການສຶກສາພາກເອກະຊົນ

ຮູບການລົງທຶນການສຶກສາພາກເອກະຊົນ ມີ ຫ້າ ຮູບການ ດັ່ງນີ້:

1. ການລົງທຶນຝ່າຍດຽວ ຂອງຜູ້ລົງທຶນພາຍໃນ ຫຼື ຕ່າງປະເທດ;
2. ການລົງທຶນຮ່ວມລະຫວ່າງ ຜູ້ລົງທຶນພາຍໃນ ກັບຕ່າງປະເທດ;
3. ການລົງທຶນທຸລະກິດຮ່ວມຕາມສັນຍາ;
4. ການລົງທຶນຮ່ວມລະຫວ່າງ ລັດວິສາຫະກິດ ແລະ ວິສາຫະກິດເອກະຊົນ;
5. ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ.

ການລົງທຶນການສຶກສາພາກເອກະຊົນ ໃນແຕ່ລະຮູບການ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 10 ກິດຈະການການລົງທຶນ ຂອງການສຶກສາພາກເອກະຊົນ

ກິດຈະການການລົງທຶນ ຂອງການສຶກສາພາກເອກະຊົນ ມີ ດັ່ງນີ້:

1. ການສຶກສາ ກ່ອນໄວຮຽນ ເປັນຕົ້ນ ໂຮງຮຽນລ້ຽງເດັກ, ໂຮງຮຽນອະນຸບານ ແລະ ສູນພັດທະນາເດັກ;
2. ສາມັນສຶກສາ ເປັນຕົ້ນ ໂຮງຮຽນປະຖົມສຶກສາ, ໂຮງຮຽນມັດທະຍົມຕອນຕົ້ນ, ໂຮງຮຽນມັດທະຍົມຕອນປາຍ ແລະ ໂຮງຮຽນສາມັນວິຊາຊີບ;
3. ອາຊີວະສຶກສາ ເປັນຕົ້ນ ສູນຝຶກອົບຮົມ, ໂຮງຮຽນ, ວິທະຍາໄລ ແລະ ສະຖາບັນ;
4. ການສຶກສາຊັ້ນສູງ ເປັນຕົ້ນ ສະຖາບັນ ແລະ ມະຫາວິທະຍາໄລ;
5. ການບໍລິການທີ່ເປັນການສົ່ງເສີມດ້ານການສຶກສາ ເປັນຕົ້ນ ການສອນ ພາສາຕ່າງປະເທດ, ການສອນຄອມພິວເຕີ້, ການບໍລິການ ສອນເສີງທຽບລະດັບ, ໃຫ້ຄຳປຶກສາ, ການແລກປ່ຽນທາງດ້ານການສຶກສາ.

ການດຳເນີນກິດຈະການການສຶກສາ ໃຫ້ປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານ ຂອງກະຊວງສຶກສາທິການ ແລະ ກິລາ ກຳນົດ.

**ມາດຕາ 11 ການຂໍອະນຸຍາດລົງທຶນ ແລະ ສ້າງຕັ້ງ ສະຖານການສຶກສາພາກເອກະຊົນ**

ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ລົງທຶນໃນກິດຈະການ ເຊົ່າ ຫຼື ສຳປະທານ ລວມທັງກິດຈະການໃນບັນຊີຄວບຄຸມ ໃຫ້ແຈ້ງຂຶ້ນທະບຽນວິສາຫະກິດນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ວິສາຫະກິດ ແລະ ສະເໜີຂໍໃບອະນຸຍາດລົງທຶນ ນຳຂະແໜງການແຜນການ ແລະ ການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ. ພາຍຫຼັງທີ່ໄດ້ຮັບໃບທະບຽນວິສາຫະກິດ ແລະ ໃບອະນຸຍາດລົງທຶນແລ້ວ ຕ້ອງຂໍອະນຸຍາດສ້າງຕັ້ງສະຖານການສຶກສາພາກເອກະຊົນ ນຳຂະແໜງການສຶກສາທິການ ແລະ ກິລາ.

ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງລົງທຶນໃນກິດຈະການທີ່ບໍ່ຢູ່ໃນບັນຊີເຊົ່າ ຫຼື ສຳປະທານ ແລະ ກິດຈະການບໍ່ຢູ່ໃນບັນຊີຄວບຄຸມ ໃຫ້ແຈ້ງຂຶ້ນທະບຽນວິສາຫະກິດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ວິສາຫະກິດ. ພາຍຫຼັງທີ່ໄດ້ຮັບໃບທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດສ້າງຕັ້ງສະຖານການສຶກສາພາກເອກະຊົນ ນຳຂະແໜງການສຶກສາທິການ ແລະ ກິລາ.

ສຳລັບ ລາຍການກິດຈະການແຕ່ລະປະເພດບັນຊີ ແມ່ນໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 12 ການພິຈາລະນາການອະນຸຍາດສ້າງຕັ້ງສະຖານການສຶກສາພາກເອກະຊົນ**

ພາຍຫຼັງໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ການຂໍອະນຸຍາດສ້າງຕັ້ງສະຖານການສຶກສາພາກເອກະຊົນ ຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ ຂະແໜງການສຶກສາທິການ ແລະ ກິລາ ເປັນຜູ້ຄົ້ນຄວ້າພິຈາລະນາ ແລະ ແຈ້ງຕອບ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ.

**ມາດຕາ 13 ເງື່ອນໄຂການຂໍອະນຸຍາດສ້າງຕັ້ງສະຖານການສຶກສາພາກເອກະຊົນ**

ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງ ຂໍອະນຸຍາດສ້າງຕັ້ງສະຖານການສຶກສາພາກເອກະຊົນ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ບຸກຄົນ:

1.1 ມີວຸດທິການສຶກສາລະດັບປະລິນຍາຕີ ຂຶ້ນໄປ, ມີປະສົບການກ່ຽວກັບວຽກງານການສຶກສາ ແລະ ການບໍລິການ ການສຶກສາ;

1.2 ມີບົດວິພາກເສດຖະກິດກ່ຽວກັບກິດຈະການ ຂອງສະຖານການສຶກສາ;

1.3 ມີຫຼັກສູດ ຕາມຫຼັກສູດການສຶກສາແຫ່ງຊາດ ຫຼື ຫຼັກສູດນາໆຊາດ ທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ຈາກກະຊວງສຶກສາທິການ ແລະ ກິລາ;

1.4 ມີສະຖານທີ່ສຳລັບການສ້າງຕັ້ງ ທີ່ເໝາະສົມ ໂດຍມີໃບຕາດິນ ຫຼື ຫຼັກຖານອື່ນ ທີ່ສະແດງກຳມະສິດ ຫຼື ສິດໃນການເປັນຜູ້ ເຊົ່າ ຫຼື ໄດ້ຮັບສຳປະທານ ລວມທັງສັນຍາເຊົ່າ ຫຼື ສຳປະທານ ພ້ອມສິດການນຳໃຊ້ ແລະ ການດຳເນີນທຸລະກິດການສຶກສາບໍ່ຕໍ່າກວ່າ ສິບ ປີ;

1.5 ມີໜັງສືຢັ້ງຢືນຮັບຮອງ ການກໍ່ສ້າງ, ການດັດແປງ ຫຼື ການສ້ອມແປງອາຄານ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

1.6 ມີຖານະການເງິນ ຕາມກົດໝາຍ ທີ່ກຳນົດໄວ້;

1.7 ບໍ່ເຄີຍຖືກສານຕັດສິນລົງໂທດ ຕັດອິດສະລະພາບ ໃນສະຖານການກະທຳຜິດໂດຍເຈດຕະນາ;

1.8 ບໍ່ເຄີຍຖືກຖອນໃບອະນຸຍາດສ້າງຕັ້ງສະຖານການສຶກສາ;

ສໍາລັບນັກລົງທຶນຕ່າງປະເທດ ຕ້ອງໄດ້ຮັບໃບອະນຸຍາດລົງທຶນຕ່າງປະເທດ ຈາກຂະແໜງການທີ່ກ່ຽວຂ້ອງ, ມີຄົນລາວເປັນຮອງຜູ້ອໍານວຍການ, ມີການຮ່ວມມືກັບສະຖານການສຶກສາພາຍໃນປະເທດທີ່ກ່ຽວຂ້ອງ ແລະ ປະກອບເອກະສານອື່ນ ຕາມລະບຽບການ.

2. ນິຕິບຸກຄົນ:

2.1 ນິຕິບຸກຄົນ ທີ່ຈະສະເໜີຂໍສ້າງຕັ້ງ ຫຼື ຂະຫຍາຍຊັ້ນຮຽນ ຫຼື ສາຂາສະຖານການສຶກສາເອກະຊົນ ໃຫ້ປະຕິບັດຕາມເງື່ອນໄຂ ທີ່ກະຊວງສຶກສາທິການ ແລະ ກິລາ ກໍານົດໄວ້;

2.2 ຖ້າເປັນມູນນິທິ ຫຼື ສະມາຄົມ ຕ້ອງມີບັນຊີລາຍຊື່, ສັນຊາດ ຂອງຄະນະກໍາມະການ ແລະ ສະມາຊິກທຸກຄົນ ຕ້ອງມີໜັງສືມອບໝາຍຢ່າງເປັນທາງການ;

2.3 ປະກອບເອກະສານອື່ນ ຕາມລະບຽບການ;

2.4 ສໍາລັບນິຕິບຸກຄົນ ທີ່ເປັນຕ່າງປະເທດ ຍັງຕ້ອງປະກອບເອກະສານເພີ່ມ ດັ່ງນີ້:

- ໃບຢັ້ງຢືນການອະນຸຍາດຈາກການຈັດຕັ້ງຂອງຕົນ ສໍາລັບຄູ່ຮ່ວມພັດທະນາ;
- ເອກະສານຢັ້ງຢືນຖານະການເງິນ.

ສໍາລັບການຂະຫຍາຍ ຫຼື ສ້າງຕັ້ງ ສາຂາສະຖານການສຶກສາພາກເອກະຊົນ ຜູ້ດໍາເນີນກິດຈະການ ການສຶກສາພາກເອກະຊົນ ກໍຕ້ອງມີເງື່ອນໄຂ ຕາມທີ່ໄດ້ກໍານົດໃນມາດຕານີ້.

**ມາດຕາ 14 ໃບອະນຸຍາດສ້າງຕັ້ງສະຖານການສຶກສາພາກເອກະຊົນ**

ໃບອະນຸຍາດສ້າງຕັ້ງສະຖານການສຶກສາພາກເອກະຊົນ ມີ ດັ່ງນີ້:

1. ໃບອະນຸຍາດສ້າງຕັ້ງສະຖານການສຶກສາພາກເອກະຊົນ ສໍາລັບກິດຈະການ ເຊົ່າ ຫຼື ສໍາປະທານ ແລະ ກິດຈະການ ທີ່ບໍ່ນອນຢູ່ໃນບັນຊີ ເຊົ່າ ຫຼື ສໍາປະທານ ມີອາຍຸການນໍາໃຊ້ ບໍ່ເກີນ ສິບ ປີ;

2. ໃບອະນຸຍາດສ້າງຕັ້ງສະຖານການສຶກສາພາກເອກະຊົນ ທີ່ດໍາເນີນກິດຈະການສົ່ງເສີມດ້ານການສຶກສາ ມີອາຍຸການນໍາໃຊ້ ບໍ່ໃຫ້ເກີນ ສອງ ປີ.

ການດໍາເນີນກິດຈະການ ການສຶກສາພາກເອກະຊົນ ຕ້ອງຜ່ານການປະເມີນຜົນ ຕາມມາດຕະຖານສະຖານການສຶກສາ ທີ່ໄດ້ກໍານົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 15 ການມອບ-ໂອນ ກໍາມະສິດ**

ຜູ້ທີ່ໄດ້ຮັບອະນຸຍາດສ້າງຕັ້ງສະຖານການສຶກສາພາກເອກະຊົນ ສາມາດ ມອບ-ໂອນ ກິດຈະການທີ່ເປັນກໍາມະສິດຕົນ ໃຫ້ແກ່ ຍາດໃກ້ຊິດ ຫຼື ບຸກຄົນອື່ນ ທີ່ມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 16 ຄ່າຮຽນ ແລະ ຄ່າບໍລິການຕ່າງໆ ຂອງສະຖານການສຶກສາພາກເອກະຊົນ**

ສະຖານການສຶກສາພາກເອກະຊົນ ທີ່ໄດ້ຮັບອະນຸຍາດສ້າງຕັ້ງ ເປັນຜູ້ກໍານົດ ຄ່າຮຽນ ແລະ ຄ່າບໍລິການ ຢູ່ສະຖານການສຶກສາຂອງຕົນ ຕາມກົດໝາຍ ແລະ ລະບຽບການ.

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຄວບຄຸມ ຄ່າຮຽນ ແລະ ຄ່າບໍລິການ ຂອງສະຖານການສຶກສາພາກເອກະຊົນ ໃນແຕ່ລະໄລຍະ.

## ໝວດທີ 4
## ຫຼັກສູດ

### ມາດຕາ 17 ຫຼັກສູດການສຶກສາ

ຫຼັກສູດການສຶກສາ ຂອງສະຖານການສຶກສາພາກເອກະຊົນ ແມ່ນ ເອກະສານ ທີ່ກຳນົດຫຼັກການ, ຈຸດໝາຍ ຂອງການສຶກສາ, ໂຄງສ້າງ, ເນື້ອໃນ, ວິທີ ແລະ ເວລາ ສຳລັບການຈັດຕັ້ງການຮຽນ-ການສອນ ຂອງແຕ່ລະຊັ້ນ, ແຕ່ລະສາຍ, ການວັດຜົນ ແລະ ການປະເມີນຜົນວິຊາຮຽນຕ່າງໆ, ເນື້ອໃນຫຼັກສູດ ຕ້ອງຮັບປະກັນ ສາມ ລັກສະນະ ແລະ ຫ້າ ຫຼັກມູນ ຂອງການສຶກສາ ແລະ ສາມາດເຊື່ອມໂຍງກັບ ພາກພື້ນ ແລະ ສາກົນ.

ສະຖານການສຶກສາພາກເອກະຊົນ ນຳໃຊ້ ຫຼັກສູດການສຶກສາແຫ່ງຊາດ, ຫຼັກສູດການສຶກສາທ້ອງຖິ່ນ ຕາມການເຫັນດີ ຂອງກະຊວງສຶກສາທິການ ແລະ ກິລາ.

ສຳລັບ ຫຼັກສູດນານາຊາດ ຫຼື ຫຼັກສູດສອງພາສາ ລະຫວ່າງ ພາສາລາວ ແລະ ພາສາຕ່າງປະເທດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 18 ການສ້າງ ແລະ ປັບປຸງ ຫຼັກສູດ

ການສ້າງ ແລະ ປັບປຸງ ຫຼັກສູດ ຂອງສະຖານການສຶກສາພາກເອກະຊົນ ຕ້ອງຮັບປະກັນໃຫ້ຜູ້ຮຽນ ເປັນພົນລະເມືອງດີ, ມີຄຸນສົມບັດ, ມີສິນທຳ, ມີຄວາມຮູ້ ຄວາມສາມາດ, ມີວິຊາຊີບ, ມີຄວາມຊຳນານງານ, ມີສຸຂະພາບພະລານາໄມ, ຮູ້ຮັກສາ ແລະ ສົ່ງເສີມ ສິລະປະວັດທະນະທຳ ແລະ ຮີດຄອງປະເພນີ ອັນດີງາມ ຂອງຊາດ.

ສະຖານການສຶກສາພາກເອກະຊົນ ໃນສາຍອາຊີວະສຶກສາ ແລະ ສາຍການສຶກສາຊັ້ນສູງ ສາມາດສ້າງ ແລະ ປັບປຸງຫຼັກສູດການສຶກສາ ຕາມແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໃນແຕ່ລະໄລຍະ ແລະ ຕ້ອງໄດ້ຜ່ານການພິຈາລະນາ ອະນຸມັດນຳໃຊ້ ຈາກກະຊວງສຶກສາທິການ ແລະ ກິລາ.

### ມາດຕາ 19 ການອະນຸມັດ ແລະ ການຍົກເລີກ ຫຼັກສູດ

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ອະນຸມັດ ຫຼື ຍົກເລີກ ຫຼັກສູດການສຶກສາ ຂອງສະຖານການສຶກສາພາກເອກະຊົນ ໃນແຕ່ລະໄລຍະ.

ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ເປັນຜູ້ອະນຸມັດ ຫຼັກສູດການສຶກສາທ້ອງຖິ່ນ ໂດຍຜ່ານການເຫັນດີ ຈາກກະຊວງສຶກສາທິການ ແລະ ກິລາ.

ສຳລັບ ຫຼັກສູດນານາຊາດ ຫຼື ຫຼັກສູດສອງພາສາ ຕ້ອງໄດ້ຮັບການອະນຸມັດນຳໃຊ້ ຈາກເຈົ້າຂອງຫຼັກສູດ ແລະ ການເຫັນດີ ຈາກກະຊວງສຶກສາທິການ ແລະ ກິລາ.

### ມາດຕາ 20 ພາສາທີ່ນຳໃຊ້ ໃນການຮຽນ-ການສອນ

ພາສາລາວ ແລະ ອັກສອນລາວ ແມ່ນ ພາສາ ແລະ ອັກສອນທາງການ ທີ່ນຳໃຊ້ໃນການຮຽນ-ການສອນ ຂອງສະຖານສຶກສາພາກເອກະຊົນ.

ຕົວເລກລາວ ແລະ ຕົວເລກສາກົນ ໃຫ້ນຳໃຊ້ເຂົ້າໃນການຮຽນ-ການສອນ ໂດຍເລີ່ມແຕ່ ຊັ້ນປະຖົມສຶກສາ ເປັນຕົ້ນໄປ. ສຳລັບສະຖານການສຶກສາກ່ອນໄວຮຽນພາກເອກະຊົນ ກໍສາມາດນຳໃຊ້ ຕົວເລກລາວ ແລະ ຕົວເລກສາກົນ ເຂົ້າໃນການຮຽນ-ການສອນ.

ສະຖານການສຶກສາພາກເອກະຊົນ ສາມາດຈັດຕັ້ງການຮຽນ-ການສອນ ພາສາຕ່າງປະເທດ, ໃນນັ້ນໃຫ້ເອົາພາສາອັງກິດ ເປັນວິຊາບັງຄັບ ໂດຍເລີ່ມແຕ່ຊັ້ນປະຖົມສຶກສາ ປີທີ ສາມ ຂຶ້ນໄປ. ສໍາລັບພາສາອື່ນ ໃຫ້ເລືອກຮຽນ, ເລືອກສອນ ຕາມຄວາມເໝາະສົມ ແລະ ຕາມເງື່ອນໄຂຕົວຈິງ ຂອງສະຖານການສຶກສາພາກເອກະຊົນ.

ສະຖານການສຶກສາພາກເອກະຊົນ ທີ່ນໍາໃຊ້ຫຼັກສູດນານາຊາດ ຫຼື ຫຼັກສູດສອງພາສາ ຕ້ອງຈັດຕັ້ງການຮຽນ-ການສອນ ວິຊາພາສາລາວ-ວັນນະຄະດີ ແລະ ປະຫວັດສາດລາວ ເປັນວິຊາບັງຄັບ ຕາມການກໍານົດ ຂອງກະຊວງສຶກສາທິການ ແລະ ກິລາ.

**ມາດຕາ 21 ການວັດ ແລະ ປະເມີນຜົນ ການຮຽນ-ການສອນ**

ການວັດ ແລະ ປະເມີນຜົນ ການຮຽນ-ການສອນ ແມ່ນ ການຕີລາຄາຜົນການຮຽນ ຂອງນັກຮຽນ, ນັກສຶກສາ ຢູ່ສະຖານການສຶກສາ ກ່ອນໄວຮຽນ, ສາມັນສຶກສາ, ອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ດ້ວຍວິທີການທົດສອບ, ການສອບເສັງ, ການຂຽນບົດລາຍງານໂຄງການຈົບຊັ້ນ ຫຼື ວິທະຍານິພົນ ຫຼື ວິທີການອື່ນ ຕາມທີ່ໄດ້ກໍານົດໄວ້ໃນຫຼັກສູດ.

**ມາດຕາ 22 ການສອບເສັງ ແລະ ການອອກປະກາສະນີຍະບັດ**

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ກໍານົດຫຼັກການ ແລະ ລະບຽບການ ກ່ຽວກັບການສອບເສັງ ແລະ ການອອກປະກາສະນີຍະບັດ ຂອງສະຖານການສຶກສາພາກເອກະຊົນ ທຸກຊັ້ນ ແລະ ທຸກສາຍ ຕາມການແບ່ງຂັ້ນຄຸ້ມຄອງ.

ສໍາລັບ ສະຖານການສຶກສາພາກເອກະຊົນ ທີ່ນໍາໃຊ້ຫຼັກສູດນານາຊາດ ຫຼື ຫຼັກສູດສອງພາສາ ແມ່ນເຈົ້າຂອງຫຼັກສູດ ເປັນຜູ້ອອກຫົວບົດສອບເສັງ ແລະ ອອກປະກາສະນີຍະບັດ.

## ໝວດທີ 5
## ຄູ, ບຸກຄະລາກອນ ແລະ ຜູ້ຮຽນ ຂອງສະຖານການສຶກສາພາກເອກະຊົນ

**ມາດຕາ 23 ຄູ ແລະ ບຸກຄະລາກອນ ແລະ ຜູ້ຮຽນ**

ຄູ ແມ່ນ ຜູ້ປະຕິບັດໜ້າທີ່ສິດສອນ, ຖ່າຍທອດຄວາມຮູ້, ສຶກສາອົບຮົມ, ຄົ້ນຄວ້າວິໄຈ, ຊຸກຍູ້, ສົ່ງເສີມ ແລະ ຊ່ວຍເຫຼືອຜູ້ຮຽນດ້ວຍຫຼາຍຮູບການ.

ບຸກຄະລາກອນ ແມ່ນ ຜູ້ເຮັດໜ້າທີ່ຄຸ້ມຄອງ, ບໍລິຫານ, ກວດກາ, ແນະນໍາ, ຊ່ວຍເຫຼືອ ແລະ ອໍານວຍຄວາມສະດວກໃຫ້ແກ່ການຮຽນ-ການສອນ ຢູ່ ສະຖານການສຶກສາພາກເອກະຊົນ.

ຜູ້ຮຽນ ແມ່ນຜູ້ທີ່ກໍາລັງສຶກສາຮຽນຮູ້ ຫຼື ຄົ້ນຄວ້າ ຢູ່ທຸກຊັ້ນ-ຂັ້ນ ຢູ່ສະຖານການສຶກສາພາກເອກະຊົນ.

**ມາດຕາ 24 ມາດຕະຖານ ແລະ ເງື່ອນໄຂ ຂອງຄູ ແລະ ບຸກຄະລາກອນ**

ຄູ ແລະ ບຸກຄະລາກອນ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ເປັນພົນລະເມືອງດີ, ມີຄຸນສົມບັດ, ມີສິນທໍາ ແລະ ມີຄວາມສັດຊື່ບໍລິສຸດ;
2. ມີປະກາສະນີຍະບັດວິຊາຊີບຄູ, ຈົບວິຊາສະເພາະໃດໜຶ່ງ ໂດຍມີໃບຢັ້ງຢືນວິຊາຊີບຄູ ແລະ ມີຜົນການຮຽນດີ;
3. ມີຄວາມສະໝັກໃຈ ແລະ ຮັກອາຊີບຄູ;
4. ມີປະຫວັດການເຄື່ອນໄຫວຂອງຕົນເອງ ແລະ ຄອບຄົວ ຈະແຈ້ງ;

5. ບໍ່ຖືກລົງວິໄນໄລ່ອອກ ຈາກອົງການຈັດຕັ້ງໃດໜຶ່ງ ແລະ ບໍ່ຖືກສານຕັດສິນ ລົງໂທດຕັດອິດສະລະພາບມາກ່ອນ;

6. ມີສຸຂະພາບດີ.

ສໍາລັບ ຄູທີ່ເປັນຄົນຕ່າງປະເທດ ນອກຈາກທີ່ໄດ້ກໍານົດໄວ້ເທິງນີ້ ຍັງຈະຕ້ອງມີໃບຢັ້ງຢືນການອອກແຮງງານໃນ ສປປ ລາວ ຈາກພາກສ່ວນທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 25 ປະເພດຄູຢູ່ສະຖານການສຶກສາພາກເອກະຊົນ**

ຄູຢູ່ສະຖານການສຶກສາພາກເອກະຊົນ ມີ ສອງປະເພດ ດັ່ງນີ້:

1. ຄູປະຈໍາ ຊຶ່ງແມ່ນ ຄູທີ່ປະຕິບັດໜ້າທີ່ສິດສອນປະຈໍາ ຢູ່ສະຖານການສຶກສາພາກເອກະຊົນ ທີ່ສິດສອນວິຊາໃດໜຶ່ງ ຕາມທີ່ກໍານົດໄວ້ໃນຫຼັກສູດ ພ້ອມທັງຮັບຜິດຊອບຝຶກອົບຮົມ ເປັນທີ່ປຶກສາໃຫ້ແກ່ນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ;

2. ຄູບໍ່ປະຈໍາ ຊຶ່ງແມ່ນ ບຸກຄົນ ທີ່ບໍ່ໄດ້ສັງກັດຢູ່ສະຖານການສຶກສາພາກເອກະຊົນ ແຕ່ຖືກເຊີນຈາກພາຍນອກມາສິດສອນ ດ້ວຍຮູບການຖ່າຍທອດຄວາມຮູ້ ໃຫ້ນັກຮຽນ, ນັກສຶກສາ ຢູ່ສະຖານການສຶກສາພາກເອກະຊົນ ຕາມຫຼັກສູດການຮຽນ-ການສອນ.

**ມາດຕາ 26 ສິດ, ໜ້າທີ່ ແລະ ພັນທະ ຂອງຄູ ແລະ ບຸກຄະລາກອນ**

ສິດ, ໜ້າທີ່ ແລະ ພັນທະ ຂອງຄູ ແລະ ບຸກຄະລາກອນ ຢູ່ສະຖານການສຶກສາພາກເອກະຊົນ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ການສຶກສາ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 27 ສິດ ແລະ ພັນທະ ຂອງຜູ້ຮຽນ**

ສິດ ແລະ ພັນທະ ຂອງຜູ້ຮຽນ ຢູ່ສະຖານການສຶກສາພາກເອກະຊົນ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ການສຶກສາ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ໝວດທີ 6
## ການປະກັນຄຸນນະພາບການສຶກສາພາກເອກະຊົນ

**ມາດຕາ 28 ການປະກັນຄຸນນະພາບການສຶກສາພາກເອກະຊົນ**

ການປະກັນຄຸນນະພາບການສຶກສາພາກເອກະຊົນ ແມ່ນ ການກໍານົດ ມາດຕະຖານ, ການຕິດຕາມການກວດກາ, ການປະເມີນຜົນ ແລະ ການກວດສອບ ຄຸນນະພາບການສຶກສາ ຢູ່ສະຖານການສຶກສາພາກເອກະຊົນ ດ້ວຍກົນໄກການປະກັນຄຸນນະພາບ ພາຍໃນ ແລະ ພາຍນອກ ໂດຍມີຈຸດປະສົງ ເພື່ອຮັບຮອງ ແລະ ຢັ້ງຢືນຜົນການຮຽນ-ການສອນ ຂອງສະຖານການສຶກສາພາກເອກະຊົນ ເພື່ອສ້າງຄວາມເຊື່ອໝັ້ນ ໃຫ້ແກ່ສັງຄົມ, ຊຸມຊົນ ແລະ ຜູ້ປົກຄອງ, ດຶງດູດຄວາມສົນໃຈ ຕໍ່ການຮຽນ-ການສອນ ຢູ່ສະຖານການສຶກສາພາກເອກະຊົນ, ເຮັດໃຫ້ຜົນການຮຽນ-ການສອນ ມີມາດຕະຖານເທົ່າທຽມມາດຕະຖານ ພາກພື້ນ ແລະ ສາກົນ.

**ມາດຕາ 29 ຫຼັກການ ແລະ ເປົ້າໝາຍ ການປະກັນຄຸນນະພາບການສຶກສາພາກເອກະຊົນ**

ຫຼັກການ ແລະ ເປົ້າໝາຍ ການປະກັນຄຸນນະພາບການສຶກສາພາກເອກະຊົນ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 30 ກົນໄກການປະກັນຄຸນນະພາບການສຶກສາພາກເອກະຊົນ**

ກົນໄກການປະກັນຄຸນນະພາບການສຶກສາພາກເອກະຊົນ ແມ່ນ ຂັ້ນຕອນການດຳເນີນງານທີ່ພົວພັນ ແລະ ເຊື່ອມໂຍງກັນ ຢ່າງເປັນລະບົບ ເປັນຕົ້ນ ການວາງແຜນ, ການຈັດຕັ້ງປະຕິບັດ, ການປະເມີນ, ການທົບທວນ ໂດຍນຳໃຊ້ບຸກຄະລາກອນ, ຊັບພະຍາກອນ, ຫຼັກການ, ມາດຕະການ, ທິດທາງປະຕິບັດ ເພື່ອໃຫ້ບັນລຸເປົ້າໝາຍ.

ກົນໄກການປະກັນຄຸນນະພາບການສຶກສາພາກເອກະຊົນ ປະກອບດ້ວຍ:

1. ການປະກັນຄຸນນະພາບພາຍໃນ;
2. ການປະກັນຄຸນນະພາບພາຍນອກ.

**ມາດຕາ 31 ການປະກັນຄຸນນະພາບພາຍໃນ**

ການປະກັນຄຸນນະພາບພາຍໃນ ແມ່ນ ການຕິດຕາມ, ການກວດກາ, ການປະເມີນຜົນ, ການກວດສອບ ແລະ ການປັບປຸງ ຄຸນນະພາບການສຶກສາພາກເອກະຊົນ ຕາມມາດຕະຖານ ຂອງກະຊວງສຶກສາທິການ ແລະ ກິລາ ໂດຍສະຖານການສຶກສາພາກເອກະຊົນ ເປັນຜູ້ປະເມີນຕົນເອງ.

ສະຖານການສຶກສາພາກເອກະຊົນ ຕ້ອງດຳເນີນການປະເມີນຕົນເອງ ແລະ ສ້າງແຜນພັດທະນາຄຸນນະພາບ ການສຶກສາທຸກປີ ຕາມວິທີການປະເມີນ, ເງື່ອນໄຂ ແລະ ມາດຕະຖານທີ່ ກະຊວງສຶກສາທິການ ແລະ ກິລາ ວາງອອກ.

**ມາດຕາ 32 ການປະກັນຄຸນນະພາບພາຍນອກ**

ການປະກັນຄຸນນະພາບພາຍນອກ ແມ່ນ ການຕິດຕາມ, ການກວດກາ, ການປະເມີນຜົນ, ການກວດສອບ ແລະ ການປັບປຸງຄຸນນະພາບການສຶກສາພາກເອກະຊົນ ຕາມມາດຕະຖານ ຂອງກະຊວງສຶກສາທິການ ແລະ ກິລາ ໂດຍນຳໃຊ້ຜູ້ປະເມີນພາຍນອກ ທີ່ໄດ້ຮັບອະນຸຍາດໃຫ້ປະເມີນຄຸນນະພາບການສຶກສາພາກເອກະຊົນ ບົນພື້ນຖານການປະສານສົມທົບກັບ ໜ່ວຍງານ, ຂະແໜງ ແລະ ກົມ ທີ່ຮັບຜິດຊອບວຽກງານປະກັນຄຸນນະພາບ ການສຶກສາ ຂອງຂະແໜງການສຶກສາທິການ ແລະ ກິລາ.

ສະຖານການສຶກສາພາກເອກະຊົນ ຕ້ອງໄດ້ຮັບການປະເມີນພາຍນອກ ຢ່າງໜ້ອຍ ໜຶ່ງຄັ້ງ ໃນທຸກ ຫ້າປີ ເພື່ອຮັບປະກັນຜົນປະໂຫຍດ ຂອງຜູ້ຮຽນ ໂດຍມີການຮັບຮອງ ແລະ ການຢັ້ງຢືນ ຄຸນນະພາບ ຈາກກະຊວງສຶກສາທິການ ແລະ ກິລາ.

ການປະກັນຄຸນນະພາບພາຍນອກ ຕ້ອງປະຕິບັດຕາມວິທີການປະເມີນ, ເງື່ອນໄຂ ແລະ ມາດຕະຖານ ທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ.

## ໝວດທີ 7
## ການສົ່ງເສີມການສຶກສາພາກເອກະຊົນ

**ມາດຕາ 33 ນະໂຍບາຍສົ່ງເສີມການສຶກສາພາກເອກະຊົນ**

ການສຶກສາພາກເອກະຊົນໄດ້ຮັບນະໂຍບາຍສົ່ງເສີມ ດັ່ງນີ້:

1. ການສົ່ງເສີມ ຕາມກິດຈະການ;
2. ການສົ່ງເສີມ ຄູ, ບຸກຄະລາກອນ ແລະ ຜູ້ຮຽນ.

**ມາດຕາ 34 ນະໂຍບາຍສົ່ງເສີມຕາມກິດຈະການ**

ນະໂຍບາຍສົ່ງເສີມ ຕາມກິດຈະການດ້ານການສຶກສາພາກເອກະຊົນ ມີ ດັ່ງນີ້:

1. ນະໂຍບາຍ ດ້ານພາສີ,ອາກອນ ຂອງການສຶກສາພາກເອກະຊົນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

2. ຄ່າໄຟຟ້າ, ຄ່ານ້ຳປະປາ, ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງໃນແຕ່ລະໄລຍະ;

3. ໃຫ້ອົງການຈັດຕັ້ງ ພາກລັດ ແລະ ພາກເອກະຊົນ ຮັບນັກສຶກສາຈາກສະຖານການສຶກສາພາກເອກະຊົນ ເຂົ້າຝຶກງານ ຕາມເງື່ອນໄຂ ແລະ ສະພາບຕົວຈິງ;

4. ອະນຸຍາດໃຫ້ສະຖານການສຶກສາພາກເອກະຊົນ ຮັບເອົາການຊ່ວຍເຫຼືອ ຈາກອົງການຈັດຕັ້ງສາກົນ, ຄູ່ຮ່ວມພັດທະນາ ແລະ ສະຖານການສຶກສາຕ່າງປະເທດ ໂດຍຜ່ານການເຫັນດີຈາກ ກະຊວງສຶກສາທິການ ແລະ ກິລາ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ແກ່ສະຖານການສຶກສາພາກເອກະຊົນ ສາມາດກູ້ຢືມເງິນ ຈາກທະນາຄານທຸລະກິດ ແລະ ແຫຼ່ງທຶນອື່ນ ຕາມກົດໝາຍ ແລະ ລະບຽບການ;

6. ອະນຸຍາດໃຫ້ສ້າງຕັ້ງກອງທຶນ ພັດທະນາ ແລະ ສົ່ງເສີມ ການສຶກສາພາກເອກະຊົນ;

7. ໄດ້ຮັບນະໂຍບາຍອື່ນ ຕາມການຕົກລົງເຫັນດີຂອງລັດຖະບານ.

**ມາດຕາ 35 ນະໂຍບາຍສົ່ງເສີມ ຄູ, ບຸກຄະລາກອນ ແລະ ຜູ້ຮຽນ**

**ນະໂຍບາຍສົ່ງເສີມ ຄູ ແລະ ບຸກຄະລາກອນ ຢູ່ສະຖານການສຶກສາພາກເອກະຊົນ ມີ ດັ່ງນີ້:**

1. ຄູ ແລະ ບຸກຄະລາກອນ ຢູ່ສະຖານການສຶກສາພາກເອກະຊົນ ສາມາດໄດ້ຮັບຕຳແໜ່ງວິຊາການ, ນາມມະຍົດຄູ ຕາມລະບຽບການທີ່ໄດ້ກຳນົດໄວ້;

2. ຄູ ແລະ ບຸກຄະລາກອນ ຢູ່ສະຖານການສຶກສາພາກເອກະຊົນ ສາມາດເຂົ້າຮ່ວມການຝຶກອົບຮົມດ້ານວິຊາການ ແລະ ຍົກລະດັບວິຊາສະເພາະ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມເງື່ອນໄຂຕົວຈິງ;

3. ຄູສອນຢູ່ສະຖານການສຶກສາພາກລັດ ສາມາດໄປສອນຢູ່ສະຖານການສຶກສາພາກເອກະຊົນ ຕາມການເຫັນດີ ຂອງການຈັດຕັ້ງທີ່ຕົນສັງກັດ;

4. ນຳໃຊ້ ເຄື່ອງແບບ ແລະ ກາໝາຍຊັ້ນ ຕາມລະບຽບການ;

5. ໄດ້ຮັບອຸດໜູນປະກັນສັງຄົມ ຕາມກົດໝາຍ;

6. ໄດ້ຮັບອຸດໜູນປະກັນສັງຄົມ ຕາມກົດໝາຍ;

7. ໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ;

**ນະໂຍບາຍສົ່ງເສີມ ຜູ້ຮຽນ ຢູ່ສະຖານການສຶກສາພາກເອກະຊົນ ມີ ດັ່ງນີ້:**

1. ສົ່ງເສີມດ້ານການຮຽນ, ຝຶກອົບຮົມ, ເຄື່ອນໄຫວກິດຈະກຳ, ເຂົ້າຮ່ວມການແຂ່ງຂັນ ຢູ່ພາຍໃນ ແລະ ຕ່າງປະເທດ;

2. ຜູ້ຮຽນທີ່ມີພອນສະຫວັນ ແລະ ຮຽນເກັ່ງ ມີຜົນການຮຽນດີເດັ່ນ ຈະໄດ້ຮັບທຶນການສຶກສາຈາກສະຖານການສຶກສາດັ່ງກ່າວ ຕາມລະບຽບການ;

3. ໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

## ໝວດທີ 8
## ການໂຈະ ແລະ ການຍຸບເລີກ

**ມາດຕາ 36 ການໂຈະການເຄື່ອນໄຫວ ຂອງສະຖານການສຶກສາພາກເອກະຊົນ**

ສະຖານການສຶກສາພາກເອກະຊົນ ຈະຖືກໂຈະການເຄື່ອນໄຫວ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີຄຳຮ້ອງຂໍໂຈະດ້ວຍຄວາມສະໝັກໃຈ;

2. ເຄື່ອນໄຫວບໍ່ຖືກກັບພາລະບົດບາດ ແລະ ຈຸດປະສົງຂອງສະຖານການສຶກສາພາກເອກະຊົນ;

3. ບໍ່ປັບປຸງ ຫຼື ພັດທະນາຄຸນນະພາບການສຶກສາ ຕາມມາດຕະຖານ ແລະ ເງື່ອນໄຂທີ່ກຳນົດໄວ້.

**ມາດຕາ 37 ການຍຸບເລີກສະຖານການສຶກສາເອກະຊົນ**

ສະຖານການສຶກສາພາກເອກະຊົນ ຈະຖືກຍຸບເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີຄຳຮ້ອງຂໍຍຸບເລີກ ດ້ວຍຄວາມສະໝັກໃຈ;

2. ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

3. ຖືກຖອນໃບທະບຽນ ວິສາຫະກິດ, ໃບອະນຸຍາດລົງທຶນ ຫຼື ໃບອະນຸຍາດສ້າງຕັ້ງ.

## ໝວດທີ 9
## ຂໍ້ຫ້າມ

**ມາດຕາ 38 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ປອມແປງເອກະສານ, ບິດເບືອນຂໍ້ມູນ ກ່ຽວກັບຜົນປະໂຫຍດທາງກົງ ແລະ ທາງອ້ອມທຸກກໍລະນີ;

2. ເຄື່ອນໄຫວທີ່ເປັນການແຕະຕ້ອງເຖິງກຽດສັກສີ, ບົດບາດຂອງຄູ, ອາຈານ ແລະ ບຸກຄະລາກອນຂອງສະຖານການສຶກສາພາກເອກະຊົນ;

3. ໂຄສະນາຊວນເຊື່ອ ກ່ຽວກັບການສຶກສາພາກເອກະຊົນ ເກີນຄວາມຈິງ;

4. ພົວພັນ, ບໍລິການ, ຊື້-ຂາຍ, ຄອບຄອງ, ເສບສິ່ງເສບຕິດ, ສິ່ງມຶນເມົາ, ສິ່ງລາມົກອານາຈານ, ການພະນັນທຸກປະເພດ, ມີອາວຸດຕ້ອງຫ້າມຢູ່ໃນການຄອບຄອງ, ບໍລິການບັນເທີງສິ່ງສຽງເນື່ອງນັນເກີນຂອບເຂດພາຍໃນ ແລະ ພາຍນອກສະຖານການສຶກສາພາກເອກະຊົນ;

5. ກະທຳໃນສິ່ງທີ່ບໍ່ເປັນການ ຊຸກຍູ້, ສົ່ງເສີມຜົນປະໂຫຍດ ແລະ ຄວາມກ້າວໜ້າ ຂອງຄູ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 39 ຂໍ້ຫ້າມສຳລັບສະຖານການສຶກສາພາກເອກະຊົນ**

ຫ້າມສະຖານການສຶກສາ ມີ ພຶດຕິກຳ ດັ່ງນີ້:

1. ຮັບນັກຮຽນເກີນແຜນ ແລະ ບໍ່ຖືກຕ້ອງຕາມມາດຕະຖານ ທີ່ກະຊວງສຶກສາທິການ ແລະ ກິລາວາງອອກ;

2. ຊື້-ຂາຍ, ໂຄສະນາ, ສົ່ງເສີມເຄື່ອງດື່ມທີ່ມີທາດເຫຼົ້າ, ສິ່ງເສບຕິດ, ສິ່ງຜິດກົດໝາຍຕ່າງໆ, ຈຳໜ່າຍອາຫານ ແລະ ເຄື່ອງດື່ມ ທີ່ບໍ່ມີຄຸນນະພາບ;

3. ຈຳແນກ ແລະ ຈຳກັດ ທາງດ້ານ ເພດ, ເຜົ່າ, ສາດສະໜາ, ສະຖານະພາບທາງຮ່າງກາຍ ແລະ ຖານະທາງດ້ານເສດຖະກິດ-ສັງຄົມ;

4. ນຳໃຊ້ເປັນສະຖານທີ່ດຳເນີນກິດຈະການອື່ນ ທີ່ບໍ່ກ່ຽວຂ້ອງກັບການໄດ້ຮັບອະນຸຍາດ ແລະ ສົ່ງຜົນກະທົບຕໍ່ການຮຽນ-ການສອນ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 40 ຂໍ້ຫ້າມສຳລັບຄູ ແລະ ບຸກຄະລາກອນ**

ຫ້າມຄູ ແລະ ບຸກຄະລາກອນ ໃນສະຖານການສຶກສາພາກເອກະຊົນ ມີ ພຶດຕິກຳ ດັ່ງນີ້:

1. ໂຄສະນາເຜີຍແຜ່ ຫຼື ເອົາຂໍ້ມູນລິງສື່ສັງຄົມອອນລາຍ ທຸກປະເພດ ທີ່ຂັດກັບແນວທາງ ນະໂຍບາຍ ແລະ ກົດໝາຍ ແລະ ເປີດເຜີຍ ຫຼື ເຜີຍແຜ່ ສິ່ງລາມົກອານາຈານ ແລະ ຂັດກັບຮີດຄອງປະເພນີອັນດີງາມຂອງຊາດ;

2. ສວຍໃຊ້ອຳນາດໜ້າທີ່, ຕຳແໜ່ງ, ຂໍເອົາ, ທວງເອົາ, ຮັບ ຫຼື ໃຫ້ສິນບົນ ແລະ ກົດໜ່ວງຖ່ວງດຶງການແກ້ໄຂວຽກງານ ຊຶ່ງກໍ່ໃຫ້ເກີດຜົນເສຍຫາຍແກ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

3. ທຸດຈະລິດໃນການຈັດຕັ້ງການຮຽນ-ການສອນ, ການຝຶກອົບຮົມວິຊາຊີບ, ການສອບເສັງ ແລະ ການທົບສອບ ລວມທັງ ການບິດເບືອນ ເນື້ອໃນຫຼັກສູດ ແລະ ສອນເພີ່ມ ໂດຍການບັງຄັບ;

4. ທຳຮ້າຍຮ່າງກາຍ, ຈິດໃຈ ແລະ ລ່ວງລະເມີດທາງເພດ ຕໍ່ຜູ້ຮຽນ ຫຼື ບຸກຄົນອື່ນ;

5. ສ້າງກຸ່ມກ້ອນ, ພັກພວກ, ປັ່ນປ່ວນ ແລະ ແບ່ງແຍກຄວາມສາມັກຄີພາຍໃນ ຫຼື ສ້າງຄວາມບໍ່ສະຫງົບ ຊຶ່ງກໍ່ໃຫ້ເກີດມີຄວາມເສຍຫາຍ ຕໍ່ການຈັດຕັ້ງ ຫຼື ບຸກຄົນອື່ນ;

6. ຂາດຄວາມຮັບຜິດຊອບ, ເມີນເສີຍ, ປະລະໜ້າທີ່, ບໍ່ປະຈຳການເປັນປົກກະຕິ ຫຼື ຢຸດເຊົາ ການປະຕິບັດໜ້າທີ່ວຽກງານ ໂດຍບໍ່ໄດ້ຮັບອະນຸຍາດ;

7. ພົວພັນ, ຊື້-ຂາຍ, ຄອບຄອງ, ເສບສິ່ງເສບຕິດ ແລະ ຫຼິ້ນການພະນັນທຸກປະເພດ ທີ່ຂັດກັບກົດໝາຍ ແລະ ລະບຽບການ ລວມທັງ ໂຄສະນາສິ່ງເສີມ ຫຼື ດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ໃນສະຖານການສຶກສາ ແລະ ສະຖານທີ່ອື່ນ ທີ່ບໍ່ເໝາະສົມ;

8. ນຸ່ງເຄື່ອງແບບຄູ ເຂົ້າໃນຮ້ານບັນເທີງ ຫຼື ສະຖານທີ່ອື່ນ ທີ່ບໍ່ເໝາະສົມ;

9. ພົວພັນ ຊູ້ສາວ ທີ່ຂັດກັບ ກົດໝາຍ, ລະບຽບການຂອງສະຖານການສຶກສາ ແລະ ຮີດຄອງປະເພນີອັນດີງາມ;

10. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 41 ຂໍ້ຫ້າມສຳລັບຜູ້ຮຽນ**

ຫ້າມຜູ້ຮຽນ ມີ ພຶດຕິກຳ ດັ່ງນີ້:

1. ລະເມີດ ລະບຽບວິໄນ ຂອງສະຖານການສຶກສາພາກເອກະຊົນ;

2. ໃຫ້ສິນບົນແກ່ຄູ ແລະ ບຸກຄະລາກອນການສຶກສາພາກເອກະຊົນ;

3. ທຸດຈະລິດໃນການຮຽນ, ການຝຶກອົບຮົມວິຊາຊີບ, ການສອບເສັງ ແລະ ການຂຽນບົດໂຄງການຈົບຊັ້ນ;

4. ພົວພັນ, ຊື້-ຂາຍ, ເສບສິ່ງເສບຕິດ ແລະ ຫຼິ້ນການພະນັນ ທຸກປະເພດທີ່ຂັດກັບ ກົດໝາຍ ແລະ ລະບຽບການ;

5. ນຸ່ງເຄື່ອງແບບນັກຮຽນ-ນັກສຶກສາ ເຂົ້າຮ້ານກິນດື່ມ ທີ່ມີສິ່ງມຶນເມົາ, ຮ້ານສະໜຸກເກີ, ຮ້ານເກມ ແລະ ເຂົ້າໃນສະຖານທີ່ບັນເທີງຕ່າງໆ;

6. ພົວພັນຊູ້ສາວ ກ່ອນໄວອັນຄວນ ທີ່ຂັດກັບຮີດຄອງປະເພນີອັນດີງາມ, ລະບຽບການຂອງສະຖານການສຶກສາພາກເອກະຊົນ ແລະ ກົດໝາຍ;

7. ພົວພັນ ແລະ ຄອບຄອງອາວຸດ, ວັດຖຸລະເບີດ ແລະ ສານເຄມີທີ່ຕ້ອງຫ້າມ;

8. ສ້າງກຸ່ມກ້ອນ, ພັກພວກ ເພື່ອກໍ່ຄວາມບໍ່ສະຫງົບ ຢູ່ໃນສະຖານການສຶກສາ ແລະ ສັງຄົມ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

## ໝວດທີ 10
## ສະພາທີ່ປຶກສາການສຶກສາພາກເອກະຊົນ

**ມາດຕາ 42 ສະພາທີ່ປຶກສາການສຶກສາພາກເອກະຊົນ**

ສະພາທີ່ປຶກສາການສຶກສາພາກເອກະຊົນ ແມ່ນ ການຈັດຕັ້ງທີ່ບໍ່ປະຈຳການ ມີພາລະບົດບາດເປັນເສນາທິການ ໃຫ້ແກ່ກະຊວງສຶກສາທິການ ແລະ ກິລາ, ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ໃນການ ຊຸກຍູ້ ແລະ ສົ່ງເສີມວຽກງານ ການລົງທຶນເຂົ້າໃນການສຶກສາພາກເອກະຊົນ, ປົກປ້ອງ ສິດ, ຜົນປະໂຫຍດ ຂອງສະຖານການສຶກສາພາກເອກະຊົນ, ຄູ ແລະ ບຸກຄະລາກອນ ລວມທັງ ຜູ້ຮຽນ ຢູ່ສະຖານການສຶກສາພາກເອກະຊົນ.

ສະພາທີ່ປຶກສາການສຶກສາພາກເອກະຊົນ ມີ ດັ່ງນີ້:

1. ສະພາທີ່ປຶກສາການສຶກສາພາກເອກະຊົນ ຂັ້ນສູນກາງ;
2. ສະພາທີ່ປຶກສາການສຶກສາພາກເອກະຊົນ ຂັ້ນແຂວງ;

ໃນກໍລະນີຈຳເປັນ ສາມາດແຕ່ງຕັ້ງ ສະພາທີ່ປຶກສາການສຶກສາພາກເອກະຊົນ ຂັ້ນເມືອງ ໄດ້.

**ມາດຕາ 43 ການແຕ່ງຕັ້ງ ແລະ ໂຄງປະກອບບຸກຄະລາກອນ ສະພາທີ່ປຶກສາການສຶກສາພາກເອກະຊົນ**

ສະພາທີ່ປຶກສາການສຶກສາພາກເອກະຊົນ ຂັ້ນສູນກາງ ຖືກແຕ່ງຕັ້ງໂດຍ ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ຊຶ່ງປະກອບດ້ວຍ ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເປັນປະທານ, ຫົວໜ້າຫ້ອງການກະຊວງສຶກສາທິການ ແລະ ກິລາ ເປັນຮອງປະທານ ທັງເປັນຫົວໜ້າກອງເລຂາ ແລະ ມີຜູ້ຕາງໜ້າ ຈາກ ກົມ ຫຼື ທຽບເທົ່າກົມ ທີ່ກ່ຽວຂ້ອງ ພາຍໃນກະຊວງສຶກສາທິການ ແລະ ກິລາ, ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ, ສະມາຄົມການສຶກສາພາກເອກະຊົນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເປັນຄະນະ ໂດຍມີຫ້ອງການກະຊວງສຶກສາທິການ ແລະ ກິລາ ເປັນກອງເລຂາ.

ສະພາທີ່ປຶກສາການສຶກສາພາກເອກະຊົນ ຂັ້ນແຂວງ ຖືກແຕ່ງຕັ້ງໂດຍ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຊຶ່ງປະກອບດ້ວຍ ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ເປັນປະທານ, ຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ເປັນຮອງປະທານ ທັງເປັນຫົວໜ້າກອງເລຂາ ແລະ ມີຜູ້ຕາງໜ້າຈາກຂະແໜງທີ່ກ່ຽວຂ້ອງ ພາຍໃນພະແນກສຶກສາທິການ ແລະ ກິລາ, ພະແນກແຜນການ ແລະ ການລົງທຶນ, ພະແນກອຸດສາຫະກຳ ແລະ ການຄ້າ, ພະແນກການເງິນ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ, ສະພາການຄ້າ ແລະ ອຸດສາຫະກຳ, ສະມາຄົມການສຶກສາພາກເອກະຊົນ ແຂວງ, ນະຄອນຫຼວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເປັນຄະນະ ໂດຍມີພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ເປັນກອງເລຂາ.

**ມາດຕາ 44 ສິດ ແລະ ໜ້າທີ່ ຂອງສະພາທີ່ປຶກສາການສຶກສາພາກເອກະຊົນ**

ສະພາທີ່ປຶກສາການສຶກສາພາກເອກະຊົນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ປະກອບຄຳເຫັນ ຕໍ່ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການສຶກສາພາກເອກະຊົນ;
2. ໃຫ້ຄຳປຶກສາແກ່ ຜູ້ດຳເນີນກິດຈະການ ການສຶກສາພາກເອກະຊົນ ລວມທັງ ການຊຸກຍູ້ ແລະ ສົ່ງເສີມ ການລົງທຶນ ເຂົ້າໃນການສຶກສາພາກເອກະຊົນ;
3. ຊຸກຍູ້, ຕິດຕາມ, ຕີລາຄາ ແລະ ປະເມີນຜົນການເຄື່ອນໄຫວ ຂອງສະຖານການສຶກສາພາກເອກະຊົນ;

4. ຄົ້ນຄວ້າ ແລະ ປະກອບຄຳເຫັນ ກ່ຽວກັບການສ້າງຕັ້ງ, ການໂຈະ, ຍຸບເລີກ ຫຼື ຖອນໃບອະນຸຍາດສ້າງຕັ້ງ ສະຖານການສຶກສາພາກເອກະຊົນ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ໝວດທີ 11
## ການຄຸ້ມຄອງ ແລະ ການກວດກາ

### ມາດຕາ 45 ອົງການຄຸ້ມຄອງ ແລະ ກວດກາ ວຽກງານການສຶກສາພາກເອກະຊົນ

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຄຸ້ມຄອງ ແລະ ກວດກາ ວຽກງານການສຶກສາພາກເອກະຊົນ ແລະ ເປັນເຈົ້າການ ປະສານສົມທົບກັບ ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ, ສະຖານການສຶກສາ, ຜູ້ປະກອບການ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານການສຶກສາພາກເອກະຊົນ ປະກອບດ້ວຍ:

1. ກະຊວງສຶກສາທິການ ແລະ ກິລາ;
2. ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ;
3. ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ;
4. ສະຖານການສຶກສາພາກເອກະຊົນ.

### ມາດຕາ 46 ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງ ແລະ ກວດກາ ວຽກງານການສຶກສາພາກເອກະຊົນ

ອົງການຄຸ້ມຄອງ ແລະ ກວດກາວຽກງານການສຶກສາພາກເອກະຊົນ ມີ ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 12
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 47 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດເນື້ອໃນ ດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 48 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 13
## ບົດບັນຍັດສຸດທ້າຍ

### ມາດຕາ 49 ເຄື່ອງໝາຍ ແລະ ຕາປະທັບ

ສະຖານການສຶກສາພາກເອກະຊົນ ທີ່ໄດ້ຮັບອະນຸຍາດສ້າງຕັ້ງ ທຸກຊັ້ນ ແລະ ທຸກສາຍ ມີເຄື່ອງໝາຍ ແລະ ຕາປະທັບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ ຕາມກົດໝາຍ ແລະ ລະບຽບການ.

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ພິຈາລະນາການນຳໃຊ້ ເຄື່ອງໝາຍ ແລະ ຕາປະທັບ ຂອງ ສະຖານການສຶກສາພາກເອກະຊົນ ທຸກຂັ້ນ ແລະ ທຸກສາຍ ຕາມການສະເໜີຂອງຜູ້ຂໍອະນຸຍາດສ້າງຕັ້ງສະຖານການສຶກສາພາກເອກະຊົນ.

**ມາດຕາ 50 ການຈັດຕັ້ງປະຕິບັດ**

ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 51 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 30 ກໍລະກົດ 2024 ເປັນຕົ້ນໄປ.

ດຳລັດສະບັບນີ້ ປ່ຽນແທນ ດຳລັດວ່າດ້ວຍ ການສຶກສາພາກເອກະຊົນ ສະບັບເລກທີ 64/ນຍ, ລົງວັນທີ 14 ສິງຫາ 1995.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

**ສອນໄຊ ສີພັນດອນ**